# The Baptist Tabernacle of Los Angeles

1329 South Hope Street, L.A. Civic Center

Mailing Address:
P. O. Box 15308
Los Angeles, CA 90015
Phone: (213) 744-9999
E-mail: rlhymersjr@sbcglobal.net
www.sermonsfortheworld.com
www.baptisttabernacle.com




Dr. R. L. Hymers, Jr.
Senior Pastor

Dr. Christopher L. Cagan
Associate Pastor

ທັນວາ 2018

ເພື່ອນທີ່ຮັກ:

"ຕໍ່ສູ້ຄວາມຢ້ານທຸກຢ່າງ "ຄືເລື່ອງລາວຊີວິດຂ້າພະເຈົ້າຊຶ່ງໄດ້ຕີພິມອອກມາໃນເດືອນເມສາຂອງປີນີ້, ທ່ານກາງຄົນທີ່ຍົກຍ້ອງໜັງສືຂອງຂ້າພະເຈົ້າຄືດຣ.ບັອບໂຈນ III ຊຶ່ງໄດ້ກ່າວວ່າຂ້າພະເຈົ້າເປັນຄືກັບ "ຜູ້ທຳນວາຍໃນພຣະຄຳພີເດີມ" ດຣ.ບິລ ມັອນໂຣ ຜູ້ເປັນປະທານສອງເທື່ອຂອງກຸ່ມ BBFI ໄດ້ເວົ້າວ່າ "ໄຮເມີແມ່ນດານຽນສະໄໝໃໝ່" ແລະດຣ.ເຮີເບີດ ຣໍລິງສ໌ ລູກຊາຍຂອງຜູ້ກໍ່ຕັ້ງ BBF ດຣ.ຈອນ ຣໍລິງສ໌ແລະເປັນປະທານຂອງມູນນິທິຣໍລິງສ໌ ເອີ້ນຂ້າພະເຈົ້າວ່າ "ຄົນອາເມລິກາດັ່ງເດີມ! ຄົນທີ່ມີນິດ! ຊີວິດຂອງລາວໄດ້ສະແດງໃຫ້ເຫັນວ່າຄວາມຮັກເຮັດໃຫ້ເກີດຄວາມແຕກຕ່າງ...ເພື່ອພຣະນາມຂອງພຣະຄຣິດ" ນັກປະກາດດອນ ບອຍສ໌ໄດ້ກ່າວວ່າ "ຕໍ່ສູ້ຄວາມຢ້ານທຸກຢ່າງ ຄວນຈະຖືກອ່ານໂດຍທຸກຄົນ,ບໍ່ພຽງແຕ່ພວກສິດຍາພິບານເທົ່ານັ້ນ, ໄຮເມີເປັນແບບຢ່າງສຳລັບທຸກຄົນ...ເລື່ອງລາວຂອງລາວຫຸ້ມຫໍ່ຄວາມຕ້ອງການຂອງຊົ່ວໂມງນີ້-ທັງຄວາມກ້າ,ຄວາມມຸ່ງໝັ້ນແລະບຸກຄະລິກ"

ເມື່ອຂ້າພະເຈົ້າໄດ້ຍິນພວກຄຣິສຕຽນທີ່ມີຊື່ສຽງເວົ້າເຖິງຂ້າພະເຈົ້າແບບນັ້ນ,ບາງເທື່ອຂ້າພະເຈົ້າກໍ່ສົງໄສວ່າມັນເກີດຂຶ້ນໄດ້ແນວໃດ, ຂ້າພະເຈົ້າມັກຈະສົງໄສວ່າ "ຂ້ອຍກາຍເປັນຄົນແບບນັ້ນໄດ້ແນວໃດ?"ໃນຕອນຕົ້ນຂອງການຮັບໃຊ້ຂອງຂ້າພະເຈົ້າແມ່ນແຕ່ກ່ອນທີ່ຂ້າພະເຈົ້າຈະຖືກເອີ້ນໃຫ້ມາເທດສະໜາ,ພຣະເຈົ້າໄດ້ມອບຂໍ້ພຣະຄຳພີທີ່ເປັນຊີວິດຂອງຂ້າພະເຈົ້າໃຫ້ຂ້າພະເຈົ້າແລ້ວ.

"ຂ້າພະເຈົ້າກະທຳທຸກສິ່ງໄດ້ໂດຍພຣະຄຣິດຜູ້ຊົງເສີມກຳລັງຂ້າພະເຈົ້າ"(ຟີລິບປອຍ 4:13)

ເປັນເວລາເກືອບ 61 ປີທີ່ຂ້າພະເຈົ້າຄົ້ນພົບວ່າຄຳສັນຍານັ້ນເປັນຄວາມຈິງ, ຕະຫຼອດຊີວິດຂອງຂ້າພະເຈົ້າ ຂ້າພະເຈົ້າໄດ້ປະເຊີນກັບຄວາມທ້າທາຍແລະຄວາມທໍ້ຖອຍຫຼາຍຢ່າງ,ແຕ່ຂ້າພະເຈົ້າກໍ່ເອົາຊະນະທຸກການຕໍ່ສູ້ ເພາະຂ້າພະເຈົ້າມັກເພິ່ງພຣະເຢຊູຄຣິດສະເໝີ,
ຍ້ອນພຣະຄຣິດຂ້າພະເຈົ້າຈຶ່ງເອົາຊະນະອຸປະສັກຕ່າງໆຢ່າງເຫຼືອເຊື່ອ

*ເວັບໄຊຂອງພວກເຮົາໄດ້ນຳສະເໜີຄຳເທດສະໜາເປັນເລື່ອງເປັນເລື່ອງ*
*ໃນສີ່ສິບພາສາທີ່ **WWW.SERMONSFORTHEWORLD.COM***

ແລະກາຍເປັນແຮງບັນດານໃຈໃຫ້ກັບຜູ້ຄົນເປັນລ້ານໆຄົນທົ່ວໂລກ, ຂ້າພະເຈົ້າເອົາຊະນະທຸກການຕໍ່ສູ້ເພາະຂ້າພະເຈົ້າເພິ່ງພຣະເຢຊູຄຣິດຢ່າງສົມບູນແບບ.

ສິ່ງເຫຼົ່ານີ້ເປັນພຽງແຕ່ຕົວຢ່າງຂອງການຕໍ່ສູ້ "ໃຫຍ່"ຕ່າງໆ, ມີການຕໍ່ສູ້ເພື່ອຄວາມບໍ່ຖືກຕ້ອງຂອງພຣະຄຳພີຊຶ່ງຂ້າພະເຈົ້າຕ້ອງຢືນຢັດຕໍ່ສູ້ຄຳສອນປອມຢູ່ໃນໂຮງຮຽນພຣະຄຳພີຂອງຂ້າພະເຈົ້າຊຶ່ງໄດ້ເຮັດໃຫ້ພຣະຄຳພີເສື່ອມເສຍ, ຂ້າພະເຈົ້າຊະນະການຕໍ່ສູ້ນັ້ນຍ້ອນຂ້າພະເຈົ້າເພິ່ງພຣະເຢຊູຢ່າງເຕັມທີ, ຕໍ່ມາກໍມີການຕໍ່ສູ້ຕໍ່ຕ້ານໜັງທີ່ດູໝິ່ນທີ່ໂຫດຮ້າຍຊື່ "ການທົດລອງສຸດທ້າຍຂອງພຣະຄຣິດ" ໜັງທີ່ໂຊໃຫ້ເຫັນວ່າພຣະເຢຊູໄດ້ຫລັບນອນກັບມາຣີຊາວມັກດາລາ, ຂ້າພະເຈົ້າຊະນະການຕໍ່ສູ້ນັ້ນຍ້ອນຂ້າພະເຈົ້າເພິ່ງພຣະເຢຊູຢ່າງເຕັມ ທີ, ຂ່າວ"ບໍ່ຈິງ"ທາງໂທລະພາບແລະທາງໜັງສືພິມກ່າວຫາວ່າຂ້າພະເຈົ້າເປັນພວກຕໍ່ຕ້ານຢິວ,ຂ້າພະເຈົ້າກໍຊະນະການຕໍ່ສູ້ນັ້ນແລະຖືກໂຕ້ແຍ້ງຢ່າງສົມບູນແບບຍ້ອນຂ້າພະເຈົ້າເພິ່ງໃນພຣະເຢຊູຢ່າງເຕັມທີແລະໃນພຣະອົງພຽງຜູ້ດຽວ, ແລ້ວກໍມີການຕໍ່ສູ້ຕໍ່ຕ້ານການເອົາລູກອອກ, ອາຈານ ຈອນຊາມູເອວເຄແກນຜູ້ຊ່ວຍຂອງຂ້າພະເຈົ້າໄດ້ເວົ້າວ່າ "ດຣ.ໄຮເມີໄດ້ນຳຄຣິສຕະຈັກຂອງຕົນໃນການຕໍ່ສູ້ເພື່ອປິດຄລີນິກເອົາລູກອອກສອງບ່ອນ, ລາວບໍ່ໄດ້ຢຸດໄດ້ເຊົາຈົນກວ່າຄລີນິກທັງສອງແຫ່ງນັ້ນໄດ້ປິດຕົວລົງຕະຫຼອດການ" ຂ້າພະເຈົ້າຢືນຢັດກັບພຣະເຢຊູ ແລະພວກເຮົາກໍຊະນະການຕໍ່ສູ້ນັ້ນຍ້ອນພວກເຮົາເພິ່ງພຣະຄຣິດ, ແລ້ວກໍມີການຕໍ່ສູ້ເພື່ອຮັກສາຕຶກຄຣິສຕະຈັກຂອງພວກເຮົາ, ຜູ້ຊາຍທີ່ຊົ່ວແລະບາບໜາໄດ້ພາສະມາຊິກຂອງພວກເຮົາ 320 ຄົນອອກໄປແລະພວກເຮົາເກືອບເສຍຕຶກຄຣິສຕະຈັກຂອງພວກເຮົາໄປ, ພວກເຮົາສາມາດເອົາຊະນະການຕໍ່ສູ້ນີ້ໄດ້ເຊັ່ນກັນເພາະ "ຂ້າພະເຈົ້າກະທຳທຸກສິ່ງໄດ້ໂດຍພຣະຄຣິດຜູ້ຊົງເສີມກຳລັງຂ້າພະເຈົ້າ" ເມື່ອຂ້າພະເຈົ້າຢູ່ໃນການຕໍ່ສູ້ແບບນີ້,ຂ້າພະເຈົ້າກໍຄິດຄຳນວນວ່າດ້ານໃດຖືກ,ດ້ານໃດຜິດ, ແລ້ວຂ້າພະເຈົ້າກໍເລືອກເອົາດ້ານຖືກ ແລະຂ້າພະເຈົ້າຊະນະຕະຫຼອດເພາະ "ຂ້າພະເຈົ້າກະທຳທຸກສິ່ງໄດ້ໂດຍພຣະຄຣິດຜູ້ຊົງເສີມກຳລັງຂ້າພະເຈົ້າ"

ໃນຊ່ວງນີ້ເມື່ອພວກນັກເທດພະຍາຍາມທີ່ຈະສ້າງຄຣິສຕະຈັກຂອງພວກເຂົາໂດຍການລັກເອົາສະມາຊິກຈາກຄຣິສຕະຈັກອື່ນໆ, ຂ້າພະເຈົ້າບໍ່ເຄີຍເຮັດແບບນັ້ນຍ້ອນວ່າຂ້າພະເຈົ້າສາມາດທີ່ຈະເອົາຊະນະຄົນທີ່ບໍ່ເຊື່ອອອກຈາກໂລກໄດ້, ເປັນຫຍັງລະ? ກໍເພາະວ່າ "ຂ້າພະເຈົ້າກະທຳທຸກສິ່ງໄດ້ໂດຍພຣະຄຣິດຜູ້ຊົງເສີມກຳລັງຂ້າພະເຈົ້າ" ນັ້ນແຫຼະຄືເຫດຜົນ! ນັ້ນແຫຼະຄືເຫດຜົນທີ່ພວກເຮົາເອົາຊະນະການຕໍ່ສູ້ເພື່ອນຳເອົາຂ່າວປະເສີດໄປທົ່ວໂລກໄດ້, ປັດຈຸບັນມີຄົນ 1,5 ລ້ານຄົນອ່ານຄຳເທດສະໜາຂອງຂ້າພະເຈົ້າຢູ່ຫຼາຍກວ່າ 221 ປະເທດທົ່ວໂລກໃນ 40 ພາສາ-ຍ້ອນວ່າ "ຂ້າພະເຈົ້າກະທຳທຸກສິ່ງໄດ້ໂດຍພຣະຄຣິດຜູ້ຊົງເສີມກຳລັງຂ້າພະເຈົ້າ"

ອາຈານ ຈອນ ເຄແກນເວົ້າວ່າ "ດຣ.ໄຮເມີຮູ້ຈາກປະສົບການທີ່ຍາວນານວ່າມີພຽງຮາກຖານທີ່ໝັ້ນຄົງອັນດຽວໃນການສ້າງຊີວິດຄືສີລາທີ່ໝັ້ນຄົງ - ຄືພຣະເຢຊູຄຣິດຜູ້ຊົງສະພາບມະນຸດ"

ລູກຊາຍຂອງຂ້າພະເຈົ້າໂຣເບີດເວົ້າວ່າ "ມີພຽງໜ້ອຍຄົນທີ່ເຂົ້າໃຈພໍ່ຂອງຂ້ອຍຍ້ອນວ່າເພິ່ນບໍ່ໄດ້ຄິດຄືກັບຄົນທົ່ວໄປ, ລາວເດີນກັບພຣະເຈົ້າ" ຂ້າພະເຈົ້າມີໄຊຊະນະໃນທຸກສະໜາມຮົບທີ່ຂ້າພະເຈົ້າໄດ້ຕໍ່ສູ້ຍ້ອນເທດຜົນດຽວກໍຄື - "ຂ້າພະເຈົ້າກະທຳທຸກສິ່ງໄດ້ໂດຍພຣະຄຣິດຜູ້ຊົງເສີມກຳລັງຂ້າພະເຈົ້າ" ນັ້ນແຫຼະຄືເຫດຜົນທີ່ພວກເຮົາມີຄຣິສຕະຈັກນີ້, ນັ້ນແຫຼະຄືເຫດຜົນຕອນທີ່ຂ້າພະເຈົ້າຂໍໃຫ້ຄົນໄດ້ຮັບຄວາມລອດພາຍໃຕ້ການເທດສະໜາຂອງຂ້າພະເຈົ້າໃຫ້ຢືນຂຶ້ນ,ເກືອບທຸກຄົນຢືນຂຶ້ນ, ມີພຽງສອງຄົນທີ່ໄດ້ຮັບຄວາມລອດຈາກບ່ອນອື່ນ.

ຜູ້ຮ່ວມງານແລະເພື່ອນທີ່ສັດຊື່ຂອງຂ້າພະເຈົ້າດຣ.ຄຣິສໂຕເຟີແອວ.ເຄແກນເວົ້າວ່າ "ດຣ.ໄຮເມີຄືຄົນທີ່ສະດຸດ,ເຈັບຊ້ຳແລະອົກຫັກ, ເພື່ອພັກດັນຕົນເອງຂຶ້ນ ແລະເອົາຊະນະອຸປະສັກທີ່ຂັດຂວາງຕ່າງໆເພື່ອສະ ແດງໃຫ້ຜູ້ຄົນເຫັນວ່າພຣະຄຣິດຊົງສາມາດຊ່ວຍພວກເຂົາໄດ້ເຊັ່ນກັນ"

ດຣ.ເອດີ ເພີວັນໂຕ ກ່າວວ່າ "ເມື່ອພຣະເຈົ້າຊົງຢູ່ກັບມະນຸດ,ກໍບໍ່ມີໃຜປາບເຂົາລົງໄດ້"

ດຣ.ໂຣເບີດແອວ.ຊຳເມີ ກ່າວວ່າ "ຂ້າພະເຈົ້າຍິນດີແລະຊົມເຊີຍຄົນທີ່ເຕັມໃຈທີ່ຈະຢືນຍັດເພື່ອຄວາມຈິງເຖິງແມ່ນວ່າເມື່ອທຸກຄົນເປັນຝ່າຍຕໍ່ສູ້ລາວຂ້າງດຽວ, ໂຣເບີດເລສລີ ໄຮເມີ ຈູເນຍເປັນຄຣິສຕຽນປະເພດນັ້ນ"

ດຣ.ເຄນທ໌ ຟິລພັອທ ກ່າວວ່າ "ດຣ.ໄຮເມີຄືນັກເທດທີ່ດີທີ່ສຸດທີ່ຄົນໃດໃນພວກເຮົາເຄີຍໄດ້ຍິນ",ອັດສະລິຍະຂອງເກົ່າບູຮານ, ຈຸດໂຟກັດຂອງລາວມັກຢູ່ທີ່ເລື່ອງລາວຂອງພຣະຄຣິດສະເໝີ"

ດຣ.ມິລ ວິຟເວີ ກ່າວວ່າ: "ດຣ.ໄຮເມີເປັນຄົນທີ່ມີຄວາມກ້າຫານທີ່ມີຈິດສຳນຶກອັນເຂັ້ມແຂງ ແລະເຕັມໃຈພ້ອມທີ່ຈະຕໍ່ສູ້ທຸກຄົນທີ່ເຂົ້າຕໍ່ສູ້ລາວຂ້າງດຽວ"

ດຣ.ຟີລ ໂກໂບ ກ່າວວ່າ "...ຕິດຕາມນັກເທດຜູ້ຍິ່ງໃຫຍ່ຄົນນີ້ສູ່ໂລກສະໄໝໃໝ່ແຫ່ງການຕໍ່ສູ້ຄືກັບລາວ,ການຕໍ່ສູ້ທີ່ດີເລື່ອງຄວາມເຊື່ອ"

ດຣ.ຄຣິສໂຕເຟີແອວ.ເຄແກນ ກ່າວວ່າ "ດຣ.ອາ.ແອວ.ໄຮເມີ ຈູເນຍ ຄືຄົນປະສົບຄວາມສຳເລັດໃນສິ່ງທີ່ເປັນໄປບໍ່ໄດ້-ຕໍ່ສູ້ຄວາມຢ້ານທຸກຢ່າງ! ຂ້າພະເຈົ້າຮູ້ເພາະຂ້າພະເຈົ້າໄດ້ເຮັດວຽກໃກ້ຊິດກັບລາວເປັນເວລາຫຼາຍກວ່າສີ່ສິບປີ"

***ເວັບໄຊຂອງພວກເຮົາໄດ້ນຳສະເໜີຄຳເທດສະໜາເປັນເລື່ອງເປັນເລື່ອງ ໃນສີ່ສິບພາສາທີ່ WWW.SERMONSFORTHEWORLD.COM***

ທ່ານສາມາດມີໜັງສືຊີວະປະຫວັດຂອງຂ້າພະເຈົ້າເລື່ອງ "ຕໍ່ສູ້ຄວາມຢ້ານທຸກຢ່າງ"ພຽງແຕ່ 10 ໂດລາເທົ່ານັ້ນ, ຈົ່ງຂຽນຈົດໝາຍຫາດຣ.ຊີ.ແອວ.ເຄແກນ ທີ່ P.O. Box 15308, Los Angeles, California 90015 ຈົ່ງໃຫ້ແນ່ໃຈທີ່ຈະຂຽນຄໍາວ່າ "ຈົດໝາຍວັນຄຣິສມາດ"ໃສ່ເທິງເຊັກຂອງທ່ານ ແລ້ວທ່ານຈະໄດ້ຮັບສ່ວນຫຼຸດ 10 ໂດລາ, ຈົ່ງສົ່ງ 10 ໂດລາ ແລ້ວເອົາເລື່ອງລາວຊີວິດຂອງຂ້າພະເຈົ້າມາ!

ຂ້າພະເຈົ້າຈະອະທິຖານຂໍໃຫ້ພຣະເຈົ້າອວຍພອນທ່ານໃນຊ່ວງຄຣິສມາດ ແລະຂໍພຣະອົງຊົງອວຍພອນທ່ານໃນຊ່ວງປີໃໝ່ນີ້ເຊັ່ນກັນ! ຂໍໃຫ້ພຣະເຢຊູໄດ້ຮັບການສັນລະເສີນ.



ດຣ.ໄຮເມີກັບເອລີນາເມຍຂອງເພິ່ນ,ໂຣເບີດລູກຊາຍຂອງເພິ່ນກັບຈີນເມຍຂອງລາວ,ແລະລູກສາວທັງສອງຂອງໂຣເບີດຮັນນາກັບຊາຣາ

ດ້ວຍຄວາມເຄົາລົບໃນພຣະເຢຊູ



ດຣ.ໄຮເມີ ຈູເນຍ
D.Min., Th.D., Litt.D.
ຟີລິບປອຍ 4:13



ຄອບຄົວໄຮເມີພ້ອມດ້ວຍລຸງເມຍຂອງເພິ່ນຟຣານຊິສໂກ ຄາສໂຕຣ,ແຄຣໍລີນາ,ໄບຣ໌ອັນມາຢັງມຈາກກົວເຕມາລາ,ເອີວິນ ຊູລາກັບແອນທອນ



ດຣ.ໄຮເມີກັບເມຍພ້ອມດ້ວຍດຣ.ເອວເມີ.ແອວ.ທາວຜູ້ທີ່ສອນໃນການປະຊຸມພຣະຄໍາພີຊ່ວງວັນກໍາມະກອນ

*ເວັບໄຊຂອງພວກເຮົາໄດ້ນໍາສະເໜີຄໍາເທດສະໜາເປັນເລື່ອງເປັນເລື່ອງ*
***ໃນສີ່ສິບພາສາທີ່* WWW.SERMONSFORTHEWORLD.COM**